ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

====000====

ສຳນັກງານນາຍົກລັດຖະມົນຕີ

ເລກທີ...136.../ ນຍ

ນະຄອນຫຼວງວຽງຈັນ,ວັນທີ ..16..05..2005

# ດຳລັດ

# ວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວ ຂອງກົມແຜນທີ່ແຫ່ງຊາດ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສ ປ ປ ລາວ ສະບັບເລກທີ 02 / ສພຊ ລົງວັນທີ 6 ພຶດສະພາ 2003 .
- ອີງຕາມເອກະສານສະເໜີສະບັບເລກທີ 090/ ກຜທ,ລົງວັນທີ 19 / 04 / 2005 ຂອງກົມແຜນທີ່ແຫ່ງຊາດ .

## ນາຍົກລັດຖະມົນຕີອອກດຳລັດ:

### ໝວດທີ I
### ທີ່ຕັ້ງແລະພາລະບົດບາດ

**ມາດຕາ 1** ກົມແຜນທີ່ແຫ່ງຊາດ ( ກ.ຜ.ທ ) ແມ່ນກົມໜຶ່ງໃນບັນດາກົງຈັກຄຸ້ມຄອງລັດ ສັງກັດໃນລະບົບການຈັດຕັ້ງ ຂອງສຳນັກງານນາຍົກລັດຖະມົນຕີ,ມີພາລະບົດບາດ ເປັນເສນາ ທິການ ແລຊ່ວຍລັດຖະບານໃນການຄຸ້ມຄອງ,ກວດກາວຽກງານສຳຫລວດ ວັດແທກ,ຖ່າຍພາບທາງອາກາດແລະສ້າງແຜນທີ່ໃນຂອບເຂດທົ່ວປະເທດຮັບຜິດຊອບ ໂດຍກົງໃນການຈັດຕັ້ງປະຕິບັດແລະເຮັດສຳເລັດໜ້າທີ່ການເມືອງທີ່ພັກ-ລັດຖະບານ ມອບໝາຍ ໃຫ້ .

### ໝວດທີ II
### ໜ້າທີ່ແລະຂອບເຂດສິດ

**ມາດຕາ 2** ໜ້າທີ່ຂອງກົມແຜນທີ່ແຫ່ງຊາດມີດັ່ງນີ້ :

2.1. ຄົ້ນຄວ້າແລະນຳສະເໜີນາຍົກລັດຖະມົນຕີ;ລືລັດຖະບານກ່ຽວກັບແຜນຍຸທະ

ສາດ ແລະ ແຜນການຮອບດ້ານກ່ຽວກັບ ການເຄື່ອນໄຫວ ວຽກງານສຳຫລວດວັດແທກ, ຖ່າຍພາບທາງອາກາດ ແລະ ສ້າງແຜນທີ່ ເພື່ອຂໍອະນຸມັດ.

2.2. ຄົ້ນຄ້ວາ ແລະ ສ້າງຮ່າງກົດໝາຍ, ນິຕິກຳ, ກົດລະບຽບ ແລະ ນະໂຍບາຍຕ່າງໆ ກ່ຽວກັບ ວຽກງານສຳຫລວດວັດແທກ, ຖ່າຍພາບທາງອາກາດ ແລະ ສ້າງແຜນທີ່ ເພື່ອສະເໜີໃຫ້ລັດຖະບານ ພິຈາລະນາ .

2.3. ກຳນົດມາດຕາຖານ, ເງື່ອນໄຂ ແລະ ກຳນົດໝາຍທາງດ້ານເຕັກນິກ ເພື່ອນຳສະເໜີນາຍົກລັດຖະມົນຕີປະກາດໃຊ້ ຫຼື ປະກາດໃຊ້ ໂດຍກົມແຜນທີ່ແຫ່ງຊາດຕາມການມອບໝາຍ ແລະ ຊຸກຍູ້, ຕິດຕາມ, ແນະນຳ, ກວດກາ ບັນດາຫົວໜ່ວຍການຈັດຕັ້ງ ແລະ ບຸກຄົນປະຕິບັດໃຫ້ຖືກຕ້ອງ.

2.4. ກໍ່ສ້າງພື້ນຖານທາງດ້ານວັດຖຸ, ເຕັກນິກ, ວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອຕອບສະໜອງໃຫ້ທັນກັບການຂະຫຍາຍຕົວຂອງວຽກງານສຳຫລວດວັດແທກ, ຖ່າຍພາບທາງອາກາດ ແລະ ສ້າງແຜນທີ່ໃນຂອບເຂດທົ່ວປະເທດ.

2.5. ຄຸ້ມຄອງ, ສະໜອງຂໍ້ມູນ, ຈັດຕັ້ງປະຕິບັດ ວຽກງານສຳຫລວດວັດແທກ, ຖ່າຍພາບທາງອາກາດ ແລະ ສ້າງແຜນທີ່ ເພື່ອຕອບສະໜອງໃຫ້ຄວາມຮຽກຮ້ອງຕ້ອງການໃນວຽກງານ ເສດຖະກິດ, ວັດທະນະທຳ, ສັງຄົມ, ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ການຄົ້ນຄ້ວາ ວິທະຍາສາດເຕັກນິກ ໃນຂອບເຂດທົ່ວປະເທດ.

2.6. ສະເໜີຄວາມເຫັນ, ນຳເອົາຜົນ ຂອງການຄົ້ນຄ້ວາ ແລະ ສັງລວມຜົນສຳເລັດ ດ້ານເຕັກນິກວິທະຍາສາດ ທີ່ມີປະສິດທິຜົນສູງ, ຄຸນນະພາບດີ ມາເຜີຍແຜ່ ແລະ ແຈ້ງໃຫ້ພາກສ່ວນຕ່າງໆເປັນປະຈຳ ເພື່ອຮັບຊາບ ແລະ ນຳໄປຈັດຕັ້ງປະຕິບັດ.

2.7. ພົວພັນຮ່ວມມື ກັບຕ່າງປະເທດ, ປະກອບສ່ວນເຂົ້າໃນການເຄື່ອນໄຫວກັບ ບັນດາອົງການຈັດຕັ້ງສາກົນຕ່າງໆ ໃນຂົງເຂດ ວຽກງານສຳຫລວດວັດແທກ, ຖ່າຍພາບທາງອາກາດ ແລະ ສ້າງແຜນທີ່ຕາມການເຫັນດີ ຂອງຂັ້ນເທິງ.

2.8. ຄຸ້ມຄອງ, ຂຶ້ນທະບຽນວິສາຫະກິດ, ຫົວໜ່ວຍສຳຫລວດວັດແທກແຜນທີ່ ແລະ ນັກວິຊາການ ທີ່ສັງກັດໃນການຈັດຕັ້ງດັ່ງກ່າວ, ພ້ອມດຽວກັນນັ້ນ ກໍ່ເກັບກຳຂຶ້ນບັນຊີເຄື່ອງມືສຳຫລວດວັດແທກ, ຖ່າຍພາບທາງອາກາດ ແລະ ສ້າງແຜນທີ່ ທີ່ມີຢູ່ໃນຂອບເຂດທົ່ວປະເທດ.

2.9. ເປັນເຈົ້າການໃນການຄຸ້ມຄອງ, ກວດກາການຈັດຕັ້ງປະຕິບັດກົດໝາຍ, ດຳລັດ, ຂໍ້ຕົກລົງ, ກົດລະບຽບ ແລະ ນະໂຍບາຍຕ່າງໆກ່ຽວກັບວຽກງານສຳຫລວດວັດແທກ, ຖ່າຍພາບທາງອາກາດ ແລະ ສ້າງແຜນທີ່ ໃນຂອບເຂດທົ່ວປະເທດ.

2.10. ດຳເນີນການກວດກາດ້ານເຕັກນິກຂອງບັນດາຫົວໜ່ວຍສຳຫລວດວັດແທກ, ຖ່າຍພາບທາງອາກາດ ແລະ ສ້າງແຜນທີ່ ພ້ອມດຽວກັນນັ້ນ ກໍ່ເຮັດໜ້າທີ່ເປັນເສນາທິ

ການຊ່ວຍລັດຖະບານໃນການຄຸ້ມຄອງມະຫາພາກຕໍ່ຂົງເຂດວຽກງານດັ່ງກ່າວ.

2.11. ພັດທະນາ, ຄຸ້ມຄອງ, ສະໜອງຂໍ້ມູນ ແລະ ຈັດຕັ້ງປະຕິບັດຕົວຈິງໃນການສຳຫລວດວັດແທກ, ຖ່າຍພາບທາງອາກາດ ແລະ ສ້າງແຜນທີ່ ໃນຂອບເຂດທົ່ວປະເທດໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດສັງຄົມ, ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບຂອງພັກ ແລະ ລັດຖະບານ.

2.12. ຄົ້ນຄ້ວາ ແລະ ນຳສະເໜີໃຫ້ລັດຖະມົນຕີ ປະຈຳສຳນັກງານນາຍົກລັດຖະມົນຕີ, ຜູ້ຊີ້ນຳກົມແຜນທີ່ແຫ່ງຊາດແຕ່ງຕັ້ງພະນັກງານປະເພດຕ່າງໆ ເຂົ້າຮັບໜ້າທີ່ຢູ່ ກົມແຜນທີ່ແຫ່ງຊາດ ຕາມເງື່ອນໄຂ, ມາດຕະຖານ ແລະ ສະພາບຕົວຈິງຂອງວຽກງານທີ່ລັດຖະບານໄດ້ກຳນົດໃຫ້.

2.13. ຄຸ້ມຄອງ, ນຳໃຊ້ພະນັກງານ-ລັດຖະກອນພາຍໃນກົມ, ສະເໜີເລື່ອນຊັ້ນ, ຍົກຍ້າຍ, ບຳລຸງສ້າງ, ຍ້ອງຍໍ, ການລົງວິໄນ ແລະ ການປະຕິບັດນະໂຍບາຍຕໍ່ພະນັກງານພາຍໃນກົມໃຫ້ຂັ້ນເທິງພິຈາລະນາ.

**ມາດຕາ 3 ຂອບເຂດສິດຂອງກົມແຜນທີ່ແຫ່ງຊາດມີດັ່ງນີ້ :**

3.1. ປະກອບຄຳເຫັນ ຫຼື ໃຫ້ຄຳປຶກສາແກ່ລັດຖະບານ ຫຼື ນາຍົກລັດຖະມົນຕີ ດ້ານວຽກງານສຳຫລວດວັດແທກ, ຖ່າຍພາບທາງອາກາດ ແລະ ສ້າງແຜນທີ່ ເພື່ອສະໜອງນະໂຍບາຍ, ແຜນຍຸດທະສາດການພັດທະນາ ເສດຖະກິດ ສັງຄົມ.

3.2. ເຂົ້າຮ່ວມການສຳຫລວດປັກຫລັກໝາຍຊາຍແດນລະຫວ່າງຊາດ ແລະ ເຂົ້າຮ່ວມກັບພາກສ່ວນກ່ຽວຂ້ອງ ເພື່ອກຳນົດເຂດແດນເຊື່ອມຕໍ່ລະຫວ່າງ ທ້ອງຖິ່ນພາຍໃນປະເທດ.

3.3. ຈັດຕັ້ງກອງປະຊຸມສຳມະນາດ້ານວິທະຍາສາດເຕັກນິກ ກ່ຽວກັບການສຳຫລວດວັດແທກ, ຖ່າຍພາບທາງອາກາດ ແລະ ສ້າງແຜນທີ່.

3.4. ເປັນຕົວແທນໃຫ້ລັດຖະບານໃນການເຄື່ອນໄຫວພົວພັນກັບບັນດາປະເທດ ແລະ ອົງການຈັດຕັ້ງສາກົນຕາມລະບຽບຫຼັກການທີ່ກຳນົດໄວ້ ເພື່ອຍາດແຍ່ງການຊ່ວຍເຫລືອທຶນຮອນ, ວັດຖຸອຸປະກອນ, ການກໍ່ສ້າງກຳລັງນັກວິຊາການ ແລະ ວິທະຍາສາດ ເຕັກນິກທີ່ທັນສະໄໝເຂົ້າໃນວຽກງານສຳຫລວດວັດແທກ, ຖ່າຍພາບທາງອາກາດ ແລະ ສ້າງແຜນທີ່ໃນຂອບເຂດທົ່ວປະເທດ.

3.5. ຄົ້ນຄ້ວານຳສະເໜີໃຫ້ລັດຖະບານ ຫຼື ນາຍົກລັດຖະມົນຕີ ເພື່ອຂໍລົບລ້າງ ຂໍ້ຕົກລົງ, ກົດລະບຽບ, ຄຳສັ່ງ, ແນະນຳ ແລະ ນະໂຍບາຍຕ່າງໆຢູ່ໃນຂົງເຂດວຽກງານສຳຫລວດວັດແທກ, ຖ່າຍພາບທາງອາກາດ ແລະ ສ້າງແຜນທີ່ ທີ່ເຫັນວ່າບໍ່ສອດຄ່ອງກັບສະພາບການ ຫຼື ຂັດກັບແນວທາງນະໂຍບາຍ ຂອງພັກ ແລະ ລະບຽບກົດໝາຍຂອງລັດ.

3.6. ອອກໃບອະນຸຍາດ, ໃບຢັ້ງຢືນຄວາມຖືກຕ້ອງທາງດ້ານເຕັກນິກກ່ຽວກັບ ການຈັດຕັ້ງປະຕິບັດວຽກງານສຳຫລວດວັດແທກ, ຖ່າຍພາບທາງອາກາດ ແລະ ສ້າງແຜນທີ່ ຂອງບັນດາອົງການຈັດຕັ້ງຕ່າງໆຢູ່ໃນຂອບເຂດທົ່ວປະເທດ.

3.7. ສະເໜີລັດຖະບານ ພິຈາລະນາຢຸດຕິການຈັດຕັ້ງປະຕິບັດ ບັນດາໂຄງການທີ່ບໍ່ຖືກຕ້ອງຕາມຂໍ້ກຳນົດທາງດ້ານເຕັກນິກ ແລະ ການນຳເຂົ້າ ເຄື່ອງມືອຸປະກອນກ່ຽວກັບການສຳຫລວດວັດແທກ, ຖ່າຍພາບທາງອາກາດ ແລະ ສ້າງແຜນທີ່ ທີ່ບໍ່ໄດ້ຮັບອະນຸມັດ ຈາກກົມແຜນທີ່ແຫ່ງຊາດ.

3.8. ສະເໜີຍ້ອງຍໍ, ຊົມເຊີຍຕໍ່ບຸກຄົນ ແລະ ນິຕິບຸກຄົນທີ່ປະຕິບັດຖືກຕ້ອງຕາມລະບຽບກົດໝາຍ, ດຳລັດ, ຂໍ້ຕົກລົງ, ກົດລະບຽບ ແລະ ຂໍ້ກຳນົດທາງດ້ານເຕັກນິກ ທີ່ລັດຖະບານປະກາດໃຊ້ຢ່າງເປັນທາງການ ຢູ່ໃນຂົງເຂດວຽກງານສຳຫລວດວັດແທກ, ຖ່າຍພາບທາງອາກາດ ແລະ ສ້າງແຜນທີ່ ພ້ອມກັນນັ້ນກໍ່ ກ່າວຟ້ອງ, ປັບໄໝ ແລະ ດຳເນີນ ຄະດີຕໍ່ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດລະບຽບກົດໝາຍ, ດຳລັດ, ແຈ້ງການ, ຂໍ້ຕົກລົງ, ກົດລະບຽບ ແລະ ຂໍ້ກຳນົດທາງດ້ານເຕັກນິກ ທີ່ປະກາດໃຊ້ຢ່າງເປັນທາງການ.

3.9. ສະເໜີຂື້ນແຜນງົບປະມານ, ຄຸ້ມຄອງ ແລະ ນຳໃຊ້ງົບປະມານ, ວັດຖຸອຸປະກອນຕ່າງໆ ທີ່ທາງການອະນຸມັດໃຫ້ກົມ.

3.10. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍສະເພາະ ຂອງນາຍົກລັດຖະມົນຕີ ຫຼື ລັດຖະມົນຕີຜູ້ຊີ້ນຳວຽກງານແຜນທີ່.

## ໝວດທີ່ III
## ໂຄງປະກອບການຈັດຕັ້ງແລະບຸກຄະລາກອນ

**ມາດຕາ 4 ໂຄງປະກອບທາງດ້ານບຸກຄະລາກອນ.**

4.1. ກົມແຜນທີ່ແຫ່ງຊາດ ປະກອບດ້ວຍຫົວໜ້າກົມ 1 ທ່ານ, ເຊິ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ, ມີໜ້າທີ່ຮັບຜິດຊອບຕໍ່ ນາຍົກລັດຖະມົນຕີ ແລະ ລັດຖະມົນຕີປະຈຳ ສຳນັກງານນາຍົກລັດຖະມົນຕີ ໃນການຜັນຂະຫຍາຍ, ຈັດຕັ້ງປະຕິບັດແຜນນະໂຍບາຍກໍ່ຄື ພາລະບົດບາດໜ້າທີ່ ຂອງຕົນທີ່ໄດ້ວາງອອກກ່ຽວກັບວຽກງານສຳຫລວດວັດແທກ, ຖ່າຍພາບທາງອາກາດ ແລະ ສ້າງແຜນທີ່.

4.2. ກົມແຜນທີ່ແຫ່ງຊາດ ປະກອບຮອງຫົວໜ້າກົມຈຳນວນໜຶ່ງ ເຊິ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີ ຜູ້ຊີ້ນຳ ຫຼື ຫົວໜ້າຫ້ອງວ່າການສຳ

ນັກງານນາຍົກລັດຖະມົນຕີ, ມີໜ້າທີ່ຊ່ວຍຫົວໜ້າກົມ ແລະ ຮັບຜິດຊອບວຽກງານດ້ານໃດດ້ານໜຶ່ງ ຕາມການມອບໝາຍ ຂອງຫົວໜ້າກົມ.

4.3. ນອກຈາກນັ້ນຍັງມີຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ພະນັກງານວິຊາການຈຳນວນໜຶ່ງ ຕາມຄວາມຮຽກຮ້ອງຕ້ອງການ ຂອງວຽກງານ.

ມາດຕາ 5 **ກົງຈັກຊ່ວຍວຽກຂອງກົມມີດັ່ງນີ້ :**

- ພະແນກ ບໍລິຫານແຜນການແລະຈັດຕັ້ງ.
- ພະແນກ ການເງິນ.
- ພະແນກ ຄຸ້ມຄອງສະໜອງວັດຖຸເຕັກນິກ.
- ພະແນກ ວິທະຍາສາດເຕັກນິກ.
- ພະແນກ ສຳຫລວດວັດແທກແຜນທີ່.
- ພະແນກ ຮູບຖ່າຍທາງອາກາດ.
- ພະແນກ ຕົກແຕ່ງແຕ້ມ ແລະ ພິມແຜນທີ່.

## ໝວດທີ່ IV
## ລະບອບແລະວິທີເຮັດວຽກ

ມາດຕາ 6 **ກົມແຜນທີ່ແຫ່ງຊາດປະຕິບັດລະບອບເຮັດວຽກດັ່ງລຸ່ມນີ້ :**

6.1. ດຳເນີນການເຄື່ອນໄຫວວຽກງານວິຊາສະເພາະ ຂອງຕົນຕາມ ແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດພາຍໃຕ້ການຊີ້ນຳ ຂອງລັດຖະມົນຕີປະຈຳ ສຳນັກງານນາຍົກລັດຖະມົນຕີ, ຜູ້ຊີ້ນຳກົມແຜນທີ່ແຫ່ງຊາດ.

6.2. ການປະຕິບັດວຽກງານ ແມ່ນປະຕິບັດ ຕາມຫລັກການລວມສູນປະຊາທິປະໄຕ, ປະຕິບັດ ລະບອບຫົວໜ້າດຽວສົມທົບກັບ ການເຮັດວຽກເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ.

6.3. ປະຕິບັດຕາມລະບອບປະຊຸມສ່ອງແສງລາຍງານ, ສຳຫລວດກວດກາ ການເຄື່ອນໄຫວວຽກງານ ຂອງແຕ່ລະພະແນກການ ແລະ ໜ່ວຍງານຕ່າງໆ; ປະຈຳເດືອນ, ງວດ ແລະ ປີ ເພື່ອສະຫຼຸບຖອດຖອນບົດຮຽນອັນດີ, ອັນອ່ອນ ແລະ ວາງທິດທາງແຜນການ ລາຍງານຂັ້ນເທິງຊາບ ເປັນປະຈຳ.

## ໝວດທີ V

## ບົດບັນຍັດສຸດທ້າຍ

ມາດຕາ 7 ກົມແຜນທີ່ແຫ່ງຊາດ ມີກາປະທັບ 01 ໜ່ວຍເພື່ອຮັບໃຊ້ໃນການເຄື່ອນໄຫວວຽກງານ ທາງລັດຖະການ .

ມາດຕາ 8 ດຳລັດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດ ວ່າດ້ວຍການຈັດຕັ້ງ ຂອງກົມແຜນທີ່ແຫ່ງຊາດສະບັບເລກທີ 034 / ນຍ, ລົງວັນທີ 09 / 03 / 1998 .

ມາດຕາ 9 ມອບໃຫ້ ກົມແຜນທີ່ແຫ່ງຊາດເປັນຜູ້ຈັດຕັ້ງປະຕິບັດ ແລະ ສຳນັກງານນາຍົກລັດຖະມົນຕີ , ບັນດາກະຊວງ , ນະຄອນຫລວງ, ແຂວງ, ເຂດພິເສດ, ພາກສ່ວນອື່ນໆ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ .

**ນາຍົກລັດຖະມົນຕີ ແຫ່ງ ສ ປ ປ ລາວ**

ບຸນຍັງ ວໍລະຈິດ